ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຝຶກອົບຮົມຫຼັກສູດການຄຸ້ມຄອງລັດສໍາລັບຜູ້ບໍລິຫານລະດັບກາງ ຊຸດທີ I



ໃນລະຫວ່າງວັນທີ 18-29 ມີນາ 2024 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບກະຊວງພາຍໃນ ໄດ້ຈັດຝຶກອົບຮົມຫຼັກສູດ "ການຄຸ້ມຄອງລັດສໍາລັບຜູ້ບໍລິຫານລະດັບກາງ ຊຸດທີ I" ຂຶ້ນ ຢູ່ທີ່ສະຖາບັນການທະນາຄານ ໂດຍການໃຫ້ກຽດກ່າວເປີດຝຶກອົບຮົມຂອງ ທ່ານ ນ ພູມມະລີ ສີຣິພົນເດດ ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ, ປະທານຮ່ວມໂດຍທ່ານ ນ ສະຫວ່າງ ໄຊຍະວົງ ຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງ ແລະ ຝຶກອົບຮົມ, ກະຊວງພາຍໃນພ້ອມດ້ວຍຄະນະ, ມີບັນດາຄະນະກົມພາຍໃນ ທຫລ ແລະ ສາຂາ ທຫລ ປະຈໍາພາກ ເຂົ້າຮ່ວມ.

ການຝຶກອົບຮົມຄັ້ງນີ້ ແມ່ນນໍາໃຊ້ຫຼັກສູດຂອງສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງ ແລະ ຝຶກອົບຮົມ ກະຊວງພາຍໃນ ໂດຍແນ່ໃສ່ສ້າງການຫັນປ່ຽນໃໝ່ ຢ່າງແຂງແຮງເລິກເຊິ່ງ, ຮອບດ້ານໃຫ້ແກ່ພະນັກງານຫຼັກແຫຼ່ງ ຂອງ

ທະນາຄານແຫ່ງ ສປປ ລາວ ໃຫ້ມີບາດກ້າວໃໝ່ໃນການນຳພາທີ່ເຂັ້ມແຂງ ທັງເປັນການຍົກລະດັບຄວາມຮູ້-ຄວາມສາມາດ, ທັກສະ, ທັດສະນະ ແລະ ພາວະຄວາມເປັນຜູ້ນຳ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ. ໃນນີ້, ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຮັບຟັງ, ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນຕົວຈິງດ້ານພຶດຕິກຳ ກັບນັກວິທະຍາກອນທີ່ເປັນອະດີດການນຳ ທີ່ມີປະສົບການດ້ານວຽກງານການບໍລິຫານຄຸ້ມຄອງລັດ ຊຶ່ງປະກອບມີທັງໝົດ 09 ບົດຮຽນ ຄື: (1) ການບໍລິຫານລັດໃນລະບົບການເມືອງ, (2) ທິດສະດີການນຳພາ ແລະ ການຄຸ້ມຄອງ, (3) ການບໍລິຫານການປ່ຽນແປງ ເພື່ອຄວາມກ້າວໜ້າ, (4) ການຄຸ້ມຄອງພະນັກງານ-ລັດຖະກອນ, (5) ທັດສະນະສຶກສາ (6) ການຝຶກອົບຮົມ ແລະ ພັດທະນາ, (7) ການວາງແຜນ ແລະ ການຄຸ້ມຄອງໂຄງການ, (8) ການຄຸ້ມຄອງ ແລະ ກວດກາງົບປະມານແຫ່ງລັດ, (9) ການຮ່າງເອກະສານທາງການ.





ການຝຶກອົບຮົມດັ່ງກ່າວ ແມ່ນໄດ້ດຳເນີນເປັນເວລາ 10 ວັນເຕັມ, ດ້ວຍບັນຍາກາດອັນຟົດຟື້ນ ແລະ ມີເນື້ອໃນເຮັດໃຫ້ການຝຶກອົບຮົມໄດ້ປິດລົງດ້ວຍຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*